**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ — ເລກທີ 1158 /ກຕສ

ນະຄອນຫຼວງວຽງຈັນ, ວັນທີ 30 ເມສາ 2026

# ຂໍ້ຕົກລົງ

# ວ່າດ້ວຍ ການດຳເນີນທຸລະກິດ ບໍລິການອິນເຕີເນັດ

- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ), ເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
- ອີງຕາມກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ, ເລກທີ 17/ສພຊ, ວັນທີ 05 ພຶດສະພາ 2017;
- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ເລກທີ 625/ນຍ, ວັນທີ 22 ຕຸລາ 2021;
- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີ ການສະກັດກັ້ນ ແລະ ແກ້ໄຂອາຊະຍາກຳທາງດ້ານອິນເຕີເນັດ ແລະ ການພະນັນອອນລາຍ, ເລກທີ 032/ນຍ, ວັນທີ 12 ທັນວາ 2025;
- ອີງຕາມໜັງສືສະເໜີ ຂອງອົງການຄຸ້ມຄອງໂທລະຄົມມະນາຄົມ, ເລກທີ 290/ອຄທ, ວັນທີ 19 ມີນາ 2026.

## ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດ ບໍລິການອິນເຕີເນັດ ເພື່ອເຮັດໃຫ້ການບໍລິການ ມີຄຸນນະພາບ, ໄດ້ມາດຕະຖານ, ສະດວກ, ວ່ອງໄວ, ປອດໄພ ແລະ ທົ່ວເຖິງ ໃນຂອບເຂດທົ່ວປະເທດ ໂດຍສະເພາະ ເຂດຫ່າງໄກສອກຫຼີກ, ເຂດຊາຍແດນ ແລະ ຮັບປະກັນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

### ມາດຕາ 2 ການດຳເນີນທຸລະກິດ ບໍລິການອິນເຕີເນັດ

ການດຳເນີນທຸລະກິດບໍລິການອິນເຕີເນັດ ແມ່ນກິດຈະການບໍລິການໜຶ່ງ ຂອງການດຳເນີນທຸລະກິດໂທລະຄົມມະນາຄົມ ເພື່ອສະໜອງບໍລິການອິນເຕີເນັດດ້ວຍຮູບແບບ ມີສາຍ ແລະ ບໍ່ມີສາຍ.

### ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ຜູ້ໃຫ້ບໍລິການອິນເຕີເນັດ** (Internet Service Provider) ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ດຳເນີນທຸລະກິດ ບໍລິການອິນເຕີເນັດ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
2. **ຜູ້ໃຊ້ບໍລິການອິນເຕີເນັດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ອຸປະກອນ ໄອຊີທີ ໃນການເຊື່ອມຕໍ່ເຂົ້າຫາເຄືອຂ່າຍອິນເຕີເນັດ ດ້ວຍຫຼາຍຈຸດປະສົງ ເຊັ່ນວ່າ: ເພື່ອອ່ານ, ຂຽນ, ສົ່ງ ແລະ ຮັບຂໍ້ມູນຂ່າວສານ;
3. **ການເຊື່ອມຕໍ່ລະບົບເຄືອຂ່າຍອິນເຕີເນັດ** ໝາຍເຖິງ ການເຊື່ອມຕໍ່ເຄືອຂ່າຍອິນເຕີເນັດ ຂອງນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຜ່ານສູນອິນເຕີເນັດແຫ່ງຊາດ ແລະ ຜ່ານຈຸດເຊື່ອມຕໍ່ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ;
4. **ການລວມສູນການສື່ສານ** ໝາຍເຖິງ ເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງດຳລັດວ່າດ້ວຍລະບົບສາຍສົ່ງໂທລະຄົມມະນາຄົມ ເລກທີ 01/ລບ, ວັນທີ 02 ມັງກອນ 2020;
5. **ຊັບພະຍາກອນໂທລະຄົມມະນາຄົມ** ໝາຍເຖິງ ເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 03 ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
6. **ເຂດເສດຖະກິດພິເສດ** ໝາຍເຖິງ ເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 57 (ປັບປຸງ) ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ເລກທີ 62/ສພຊ, ວັນທີ 28 ມິຖຸນາ 2024;
7. **ເຄືອຂ່າຍອິນເຕີເນັດ (Internet Network)** ໝາຍເຖິງ ການເຊື່ອມໂຍງຂອງບັນດາຄອມພິວເຕີ ຫຼື ອຸປະກອນສື່ສານຊະນິດຕ່າງໆ ເພື່ອໃຊ້ໃນການສື່ສານ;
8. **IP Address (Internet Protocol Address)** ໝາຍເຖິງ ເລກໝາຍຂອງຄອມພິວເຕີ ຫຼື ອຸປະກອນ ທີ່ບໍ່ຊໍ້າກັນ ເພື່ອໃຊ້ລະບຸຕຳແໜ່ງຂອງອຸປະກອນ, ຄອມພິວເຕີ ຫຼື ເຄືອຂ່າຍໃນການເຊື່ອມຕໍ່ອິນເຕີເນັດ;
9. **Border Gateway Protocol (BGP)** ໝາຍເຖິງ ໂປໂຕຄອລ ການເຊື່ອມຕໍ່ລະຫວ່າງສອງອົງກອນ ທີ່ມີ ເລກໝາຍເຄືອຂ່າຍ ASN (Autonomous System Number) ເປັນໂຕກຳນົດ;
10. ເລກໝາຍເຄືອຂ່າຍ **ASN (Autonomous System Number)** ໝາຍເຖິງ ເລກໝາຍສະເພາະທີ່ບໍ່ຊໍ້າກັນ ເພື່ອຈັດກຸ່ມ ຂອງເຄືອຂ່າຍອິນເຕີເນັດ ຊຶ່ງໃຊ້ເປັນເລກໝາຍກຳນົດເຄືອຂ່າຍຂອງອົງການໃດໜຶ່ງ.

**ມາດຕາ 4** ຫຼັກການໃນການດຳເນີນທຸລະກິດບໍລິການອິນເຕີເນັດ

ການບໍລິການອິນເຕີເນັດ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນ ການບໍລິການອິນເຕີເນັດໃຫ້ໄດ້ ຄຸນນະພາບ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້;
2. ຮັບປະກັນ ການຂະຫຍາຍເຄືອຂ່າຍອິນເຕີເນັດໃຫ້ທົ່ວເຖິງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ;
3. ຮັບປະກັນ ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ໃຫ້ເກີດປະໂຫຍດສູງສຸດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
4. ຮັບປະກັນ ການລວມສູນການສື່ສານ ແລະ ການເຊື່ອມຕໍ່ກັບລະບົບຂອງພາກລັດ;
5. ຮັບປະກັນ ສິດຜົນປະໂຫຍດ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ອິນເຕີເນັດ;

6. ຮັບປະກັນ ໄດ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຈົບງາມຂອງສັງຄົມ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ຫຼື ໃຊ້ບໍລິການ ອິນເຕີເນັດ ຢູ່ພາຍໃນ ສປປ ລາວ.

## ໝວດທີ 2
## ການດຳເນີນທຸລະກິດ ບໍລິການອິນເຕີເນັດ

**ມາດຕາ 6 ປະເພດການດຳເນີນທຸລະກິດ ບໍລິການອິນເຕີເນັດ**

ການດຳເນີນທຸລະກິດ ບໍລິການອິນເຕີເນັດ ມີ 02 ປະເພດ ດັ່ງນີ້:

1. ບໍລິການອິນເຕີເນັດ ພາຍໃນປະເທດ;
2. ບໍລິການອິນເຕີເນັດ ລະຫວ່າງປະເທດ.

**ມາດຕາ 7 ການດຳເນີນທຸລະກິດ ບໍລິການອິນເຕີເນັດ ພາຍໃນປະເທດ**

ການດຳເນີນທຸລະກິດ ບໍລິການອິນເຕີເນັດ ພາຍໃນປະເທດ ແມ່ນຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີ ຫຼື ບໍ່ມີເຄືອຂ່າຍອິນເຕີເນັດເປັນຂອງຕົນເອງ, ບໍ່ສາມາດເຊື່ອມຕໍ່ກັບເຄືອຂ່າຍອິນເຕີເນັດຂອງຕ່າງປະເທດໄດ້ໂດຍກົງ ແລະ ສາມາດໃຫ້ບໍລິການໃນຂອບເຂດພື້ນທີ່ໃນ 03 ຮູບແບບ ດັ່ງນີ້:

1. ການໃຫ້ບໍລິການອິນເຕີເນັດ ໃນຂອບເຂດພື້ນທີ່ທົ່ວປະເທດ;
2. ການໃຫ້ບໍລິການອິນເຕີເນັດ ໃນຂອບເຂດພື້ນທີ່ແຂວງໃດໜຶ່ງ;
3. ການໃຫ້ບໍລິການອິນເຕີເນັດ ໃນຂອບເຂດພື້ນທີ່ສະເພາະໃດໜຶ່ງ ທີ່ລັດຖະບານຕ້ອງການພັດທະນາສະເພາະ ຫຼື ຈຸດທີ່ມີຄວາມຕ້ອງການນຳໃຊ້ ດ້ານເຕັກນິກການບໍລິການອິນເຕີເນັດ ເປັນອັນສະເພາະໃນຂົງເຂດນັ້ນ ເຊັ່ນ: ເຂດເຕັກໂນໂລຊີລະດັບສູງ, ເຂດເສດຖະກິດພິເສດ, ພາຍໃນໂຮງງານ, ບ້ານຈຸດສຸມພັດທະນາ, ເຂດຫ່າງໄກສອກຫຼີກ ແລະ ພື້ນທີ່ສະເພາະອື່ນໆ, ບໍ່ສາມາດໃຫ້ບໍລິການແກ່ສັງຄົມ ນອກເໜືອຈາກຂອບເຂດທີ່ກຳນົດ.

**ມາດຕາ 8 ການດຳເນີນທຸລະກິດ ບໍລິການອິນເຕີເນັດ ລະຫວ່າງປະເທດ**

ການດຳເນີນທຸລະກິດ ບໍລິການອິນເຕີເນັດ ລະຫວ່າງປະເທດ ແມ່ນຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີເຄືອຂ່າຍອິນເຕີເນັດເປັນຂອງຕົນເອງ, ສາມາດເຊື່ອມຕໍ່ກັບເຄືອຂ່າຍອິນເຕີເນັດຂອງຕ່າງປະເທດໄດ້ໂດຍກົງ, ຊຶ່ງປະກອບມີ 03 ຮູບແບບ ດັ່ງນີ້:

1. **ການດຳເນີນທຸລະກິດນຳເຂົ້າ ບໍລິມາດອິນເຕີເນັດ** ແມ່ນການນຳເຂົ້າບໍລິມາດອິນເຕີເນັດຈາກຕ່າງປະເທດ ເພື່ອມາຈຳໜ່າຍໃຫ້ແກ່ຜູ້ດຳເນີນທຸລະກິດ ບໍລິການອິນເຕີເນັດ ພາຍໃນປະເທດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
2. **ການດຳເນີນທຸລະກິດສົ່ງອອກ ບໍລິມາດອິນເຕີເນັດ** ແມ່ນການສົ່ງອອກບໍລິມາດອິນເຕີເນັດ ຈາກ ສປປ ລາວ ໄປສູ່ຕ່າງປະເທດ;
3. **ການດຳເນີນທຸລະກິດທາງຜ່ານ ບໍລິມາດອິນເຕີເນັດ** (IP Transit) ແມ່ນການນຳເອົາບໍລິມາດອິນເຕີເນັດ ຜ່ານ ສປປ ລາວ ຈາກປະເທດຕົ້ນທາງ ໄປຫາ ປະເທດປາຍທາງ.

## ໝວດທີ 3
## ຮູບແບບ ແລະ ກິດຈະການ ບໍລິການອິນເຕີເນັດ

**ມາດຕາ 9 ຮູບແບບ ບໍລິການອິນເຕີເນັດ**

ບໍລິການອິນເຕີເນັດ ປະກອບ ມີ 02 ຮູບແບບ ດັ່ງນີ້:

1. ການບໍລິການອິນເຕີເນັດ ຮູບແບບມີສາຍ;
2. ການບໍລິການອິນເຕີເນັດ ຮູບແບບບໍ່ມີສາຍ.

**ມາດຕາ 10 ກິດຈະການບໍລິການອິນເຕີເນັດ ຮູບແບບມີສາຍ**

ກິດຈະການບໍລິການອິນເຕີເນັດ ຮູບແບບມີສາຍ ປະກອບມີດັ່ງນີ້:

1. ບໍລິການອິນເຕີເນັດແບບ Fiber To The (X);
2. ບໍລິການອິນເຕີເນັດແບບ Leased Line;
3. ບໍລິການສາຍເຊົ່າແບບ International Private Leased Circuit (IPLC), Domestic Private Leased Circuit (DPLC), Multiprotocol Label Switching (MPLS) ແລະ ອື່ນໆ;
4. ບໍລິການເຄືອຂ່າຍ ສ່ວນຕົວ (Virtual Private Network, VPN);
5. ບໍລິການອິນເຕີເນັດ ຜ່ານສາຍໄຟຟ້າ (Power Line);
6. ບໍລິການອິນເຕີເນັດ ແບບມີສາຍອື່ນ.

**ມາດຕາ 11 ກິດຈະການບໍລິການອິນເຕີເນັດ ຮູບແບບບໍ່ມີສາຍ**

ກິດຈະການ ບໍລິການອິນເຕີເນັດ ຮູບແບບບໍ່ມີສາຍ ປະກອບມີດັ່ງນີ້:

1. ບໍລິການອິນເຕີເນັດ ຜ່ານເຄືອຂ່າຍໂທລະສັບມືຖື ດ້ວຍລະບົບ 3G, 4G, 5G ແລະ 6G;
2. ບໍລິການອິນເຕີເນັດ ຜ່ານເຄືອຂ່າຍ WiMAX;
3. ບໍລິການອິນເຕີເນັດ ຜ່ານການສື່ສານຜ່ານດາວທຽມ;
4. ບໍລິການອິນເຕີເນັດ ຜ່ານສະຖານີລອຍຟ້າລະດັບສູງ (High Altitude Platform Station, HAPS);
5. ບໍລິການອິນເຕີເນັດ ແບບບໍ່ມີສາຍອື່ນ.

## ໝວດທີ 4
## ການຂໍອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ

**ມາດຕາ 12 ເງື່ອນໄຂການດຳເນີນທຸລະກິດ ບໍລິການອິນເຕີເນັດ**

ເງື່ອນໄຂການດຳເນີນທຸລະກິດ ບໍລິການອິນເຕີເນັດ ປະກອບມີດັ່ງນີ້:

1. ຜູ້ດຳເນີນທຸລະກິດ ແລະ/ຫຼື ຜູ້ຖືຮຸ້ນ ຕ້ອງມີປະຫວັດຈະແຈ້ງ, ບໍ່ຢູ່ໃນລະຫວ່າງການຖືກກ່າວຫາ ຫຼື ຖືກດຳເນີນຄະດີຕາມກົດໝາຍ ໃນໄລຍະທີ່ກຳລັງດຳເນີນການຂໍອະນຸຍາດ;
2. ຕ້ອງປະຕິບັດຕາມມາດຕະຖານ ເຕັກນິກ, ຄວາມປອດໄພ ແລະ ການເຊື່ອມຕໍ່ ທາງດ້ານເຄືອຂ່າຍອິນເຕີເນັດ ຕາມເນື້ອໃນ ມາດຕາ 21, ມາດຕາ 22 ແລະ ມາດຕາ 23 ຂອງຂໍ້ຕົກລົງສະບັບນີ້;

3. ການຕິດຕັ້ງສາຍໄຍແກ້ວນຳແສງ (Optical Fiber Cable) ໃນຂອບເຂດທົ່ວປະເທດ ຕ້ອງໄດ້ຮັບການອະນຸຍາດ ແລະ ມີແຈ້ງການ ຈາກຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຈຶ່ງສາມາດດຳເນີນການຕິດຕັ້ງໄດ້;
4. ຕ້ອງພິມສັນຍາລັກກາໝາຍ ຂອງຜູ້ໃຫ້ບໍລິການອິນເຕີເນັດ ໃສ່ດ້ານນອກຂອງອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢ່າງຈະແຈ້ງ ແລະ ສາມາດກວດສອບໄດ້;
5. ມີທີ່ຕັ້ງສຳນັກງານ ຢູ່ພາຍໃນ ສປປ ລາວ;
6. ມີຄວາມໝັ້ນຄົງທາງດ້ານການເງິນ ແລະ ມີທຶນພຽງພໍສຳລັບການດຳເນີນທຸລະກິດບໍລິການອິນເຕີເນັດແຕ່ລະປະເພດ;
7. ມີບຸກຄະລາກອນປະຈຳການປົກກະຕິ ທີ່ມີຄວາມຮູ້ຄວາມສາມາດ ແລະ ມີປະສົບການດ້ານໂທລະຄົມມະນາຄົມ ຫຼື ໄອທີ ຢ່າງໜ້ອຍ 02 ປີ ຂຶ້ນໄປ. ມີຈຳນວນພະນັກງານວິຊາການ, ບໍລິການ ແລະ ບໍລິຫານທີ່ເໝາະສົມກັບຈຳນວນກິດຈະການ ແລະ ຂອບເຂດພື້ນທີ່ການບໍລິການ ທີ່ໄດ້ຮັບອະນຸຍາດ;
8. ມີບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດຳເນີນທຸລະກິດລະອຽດ;
9. ຕ້ອງມີເຄືອຂ່າຍ ຫຼັກ ແລະ ສຳຮອງ (N+1) ເພື່ອຮັບປະກັນການບໍລິການໃຫ້ໄດ້ຕະຫຼອດ 24ຊົ່ວໂມງ;
10. ມີໜ່ວຍງານທີ່ສາມາດບຳລຸງຮັກສາ ແລະ ສ້ອມແປງ ຕາມແລວທາງສາຍສົ່ງອິນເຕີເນັດ ທີ່ປະກອບມີເຄື່ອງມືຄົບຊຸດ ແລະ ພາຫະນະຮັບໃຊ້;
11. ໃນກໍລະນີ ທີ່ເປັນບໍລິສັດຮ່ວມທຶນ ຕ້ອງມີສັນຍາຮ່ວມທຶນນຳກັນ;
12. ສັນຍາເຊົ່າໃຊ້ເຄືອຂ່າຍອິນເຕີເນັດ ເພື່ອໃຫ້ບໍລິການ (ສຳລັບ ປະເພດການດຳເນີນທຸລະກິດ ບໍລິການອິນເຕີເນັດ ພາຍໃນປະເທດ ທີ່ບໍ່ມີເຄືອຂ່າຍອິນເຕີເນັດເປັນຂອງຕົນເອງ);
13. ກິດຈະການບໍລິການອິນເຕີເນັດ ຮູບແບບບໍ່ມີສາຍ ທີ່ຕ້ອງໄດ້ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມຕ້ອງໄດ້ຮັບອະນຸຍາດນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເສຍກ່ອນ;
14. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ.

ສຳລັບປະເພດການດຳເນີນທຸລະກິດ ບໍລິການອິນເຕີເນັດ ລະຫວ່າງປະເທດ, ນອກຈາກເງື່ອນໄຂຂ້າງເທິງນັ້ນ ຍັງມີເງື່ອນໄຂສະເພາະ ກ່ອນທີ່ຈະໃຫ້ການບໍລິການ ແກ່ສັງຄົມ ແລະ ພາກສ່ວນຕ່າງໆ ທັງພາຍໃນ ສປປ ລາວ ແລະ ຕ່າງປະເທດ ໃຫ້ປະຕິບັດດັ່ງນີ້:

15. ຕ້ອງສຳເລັດການເຊື່ອມຕໍ່ລະບົບອິນເຕີເນັດຂອງຕົນ ເຂົ້າກັບລະບົບລວມສູນການສື່ສານ ແລະ ລະບົບຕ່າງໆ ຂອງພາກລັດ ທີ່ລັດຖະບານກຳນົດໃນແຕ່ລະໄລຍະ;
16. ຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນຈຸດເຊື່ອມຕໍ່ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຂົ້າ-ອອກ ສປປ ລາວ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກ່ອນການເຊື່ອມຕໍ່ຕົວຈິງ;
17. ມີສັນຍາການຊື້-ຂາຍບໍລິມາດອິນເຕີເນັດກັບຕ່າງປະເທດ (ພາຍຫຼັງໄດ້ຮັບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ).

ສຳລັບກິດຈະການບໍລິການອິນເຕີເນັດ ຜ່ານການສື່ສານຜ່ານດາວທຽມ, ນອກຈາກເງື່ອນໄຂຂ້າງເທິງນັ້ນ ຍັງມີເງື່ອນໄຂສະເພາະ ດັ່ງນີ້:

18. ໄດ້ຮັບໃບອະນຸຍາດ ສິດໃນການໃຫ້ບໍລິການສື່ສານຜ່ານດາວທຽມ ສໍາລັບດາວທຽມ ຕ່າງປະເທດ (Landing Rights);
19. ຕ້ອງສ້າງຕັ້ງເປັນບໍລິສັດຮ່ວມທຶນກັບລັດຖະບານ ສປປ ລາວ;
20. ຕ້ອງສ້າງຕັ້ງສະຖານີດາວທຽມພາກພື້ນດິນ ຢູ່ໃນ ສປປ ລາວ ເພື່ອຮັບ-ສົ່ງສັນຍານອິນເຕີເນັດ ລະຫວ່າງ ປະເທດ;
21. ເງື່ອນໄຂອື່ນ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກໍານົດ.

**ມາດຕາ 13 ເອກະສານປະກອບ ການຂໍອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ**

ນິຕິບຸກຄົນ ທີ່ມີຈຸດປະສົງຕ້ອງການດໍາເນີນທຸລະກິດ ບໍລິການອິນເຕີເນັດ ຕ້ອງຂໍອະນຸຍາດນໍາຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໂດຍປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ພ້ອມປະກອບເອກະສານຄົບຖ້ວນ ແລະ ຖືກຕ້ອງ ດັ່ງນີ້:

1. ໜັງສືສະເໜີ ຕາມແບບຟອມຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ກໍານົດ;
2. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການດໍາເນີນທຸລະກິດ;
3. ສໍາເນົາສີ ໃບອະນຸຍາດລົງທຶນ;
4. ສໍາເນົາສີ ໃບອະນຸຍາດນໍາໃຊ້ເລກໝາຍອິນເຕີເນັດ (IP Address) ແລະ ເລກໝາຍເຄືອຂ່າຍ (AS Number);
5. ສໍາເນົາສີ ໃບທະບຽນວິສາຫະກິດ;
6. ສໍາເນົາສີ ໃບຢັ້ງຢືນມອບພັນທະອາກອນ (ທີ່ບໍ່ໝົດອາຍຸ);
7. ຊີວະປະຫວັດລະອຽດ ຂອງຜູ້ອໍານວຍການໃຫຍ່ ແລະ/ ຫຼື ຜູ້ລົງທຶນ ແລະ/ ຫຼື ຜູ້ຖືຮຸ້ນ;
8. ຊີວະປະຫວັດຫຍໍ້ຂອງ ວິຊາການເຕັກນິກ ແລະ ໃບຢັ້ງຢືນວຸດທິການສຶກສາ;
9. ໃບຢັ້ງຢືນຖານະການເງິນ ຈາກທະນາຄານພາຍໃນ ສປປ ລາວ ໄລຍະ 06 ເດືອນ ນັບຈາກມື້ຍື່ນເອກະສານ;
10. ໃບຢັ້ງຢືນທີ່ຢູ່, ສໍາເນົາສໍາມະໂນຄົວ, ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ ຂອງຜູ້ອໍານວຍການໃຫຍ່ ແລະ ຜູ້/ ຫຼື ຜູ້ລົງທຶນ ແລະ/ຫຼື ຜູ້ຖືຮຸ້ນ (ທີ່ບໍ່ໝົດອາຍຸ);
11. ສໍາເນົາສັນຍາການຮ່ວມທຶນ ແລະ ສັນຍາຜູ້ຖືຮຸ້ນ (ກໍລະນີບໍລິສັດ ຮ່ວມທຶນ);
12. ສັນຍາອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ສັນຍາຊື້-ຂາຍບໍລິມາດອິນເຕີເນັດ, ສັນຍາເຊົ່າເຄືອຂ່າຍ, ສັນຍາເຊົ່າໂຄງລ່າງພື້ນຖານໂທລະຄົມມະນາຄົມ, ອິນເຕີເນັດ ແລະ ອື່ນໆ (ພາຍຫຼັງໄດ້ຮັບອະນຸຍາດ 06 ເດືອນ);
13. ໃບແຕ່ງຕັ້ງ ເປັນຜູ້ອໍານວຍການບໍລິສັດ ຈາກບໍລິສັດ ຫຼື ກຸ່ມບໍລິສັດ ໃນກໍລະນີທີ່ຖືກແຕ່ງຕັ້ງຈາກ ຜູ້ຖືຮຸ້ນ;
14. ໃບຢັ້ງຢືນທີ່ຕັ້ງສໍານັກງານ ອອກໃຫ້ໂດຍອົງການປົກຄອງທ້ອງຖິ່ນ;
15. ຮູບສີ 3 x 4 ຈໍານວນ 02 ໃບ ທີ່ມີອາຍຸບໍ່ເກີນ 03 ເດືອນ.

ສໍາລັບກິດຈະການບໍລິການອິນເຕີເນັດ ຜ່ານການສື່ສານຜ່ານດາວທຽມ, ນອກຈາກເງື່ອນໄຂຂ້າງເທິງນັ້ນ ຍັງມີເອກກະສານສະເພາະ ດັ່ງນີ້:

16. ໃບອະນຸຍາດ ສິດໃນການໃຫ້ບໍລິການສື່ສານຜ່ານດາວທຽມ ສໍາລັບດາວທຽມຕ່າງປະເທດ (Landing Rights);
17. ສັນຍາ ຮ່ວມທຶນກັບລັດຖະບານ ສປປ ລາວ;

18. ໃບອະນຸຍາດ ສ້າງຕັ້ງສະຖານີດາວທຽມພາກພື້ນດິນ ເພື່ອ ຮັບ-ສົ່ງ ສັນຍານອິນເຕີເນັດ ລະຫວ່າງປະເທດ ຢູ່ ໃນ ສປປ ລາວ ຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;
19. ເອກະສານອື່ນທີ່ກ່ຽວຂ້ອງ ຕາມການກຳນົດ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ;

ຖ້າປະກອບເອກະສານບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຈະບໍ່ ຮັບເອກະສານເພື່ອພິຈາລະນາ.

**ມາດຕາ 14 ໄລຍະເວລາພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ**

ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຈະຄົ້ນຄວ້າ ແລະ ພິຈາລະນາ ການສະເໜີຂໍໃບອະນຸຍາດ ດຳເນີນທຸລະກິດ ບໍລິການອິນເຕີເນັດ ພາຍໃນ 30 ວັນ ນັບຈາກວັນທີ່ປະກອບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້. ຖ້າຫາກບໍ່ສາມາດອອກອະນຸຍາດໃຫ້ໄດ້ ຈະແຈ້ງສາເຫດ ເປັນລາຍລັກອັກສອນພາຍໃນ 15 ວັນລັດຖະການ.

**ມາດຕາ 15 ອາຍຸ ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ**

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດຕາມແຜນການດຳເນີນທຸລະກິດ ຂອງພາກສ່ວນທີ່ສະເໜີ ໃຫ້ ໄປຕາມແຜນພັດທະນາ ຂອງຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ, ໃບອະນຸຍາດດຳເນີນທຸລະກິດ ບໍລິການ ອິນເຕີເນັດ ແບ່ງອອກເປັນ 02 ໄລຍະ ດັ່ງນີ້:

1. ໄລຍະທີ 01: ອອກໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ຊົ່ວຄາວ ມີອາຍຸນຳໃຊ້ 01 ປີ ສາມາດຕໍ່ໄດ້ບໍ່ເກີນ 02 ປີ;
2. ໄລຍະທີ 02: ອອກໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ຖາວອນ ມີອາຍຸນຳໃຊ້ 01 ປີ ສາມາດຕໍ່ໄດ້.

**ມາດຕາ 16 ການຕໍ່ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ**

ການຕໍ່ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ຕ້ອງຍື່ນໃບຄຳຮ້ອງຂໍຕໍ່ ກ່ອນວັນໝົດອາຍຸ 30 ວັນ ແລະ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງ ດັ່ງນີ້:

1. ໜັງສືສະເໜີ ຕາມແບບຟອມ ທີ່ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ;
2. ບົດສະຫຼຸບການເຄື່ອນໄຫວດຳເນີນທຸລະກິດປີປະຈຸບັນ ແລະ ແຜນການດຳເນີນທຸລະກິດຂອງປີທີ່ຂໍຕໍ່ (ຕາມແບບຟອມ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ);
3. ບົດສະຫຼຸບການເງິນປີປະຈຸບັນ ແລະ ແຜນການຂອງປີທີ່ຂໍຕໍ່;
4. ໃບອະນຸຍາດ ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ (ສຳລັບກິດຈະການບໍລິການອິນເຕີເນັດ ຮູບ ແບບບໍ່ມີສາຍ ທີ່ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ);
5. ໃບຢັ້ງຢືນການມອບພັນທະເຂົ້າກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ;
6. ໃບຢັ້ງຢືນການກວດກາຄຸນນະພາບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ອອກໃຫ້ ໂດຍ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
7. ສຳເນົາໃບອະນຸຍາດສະບັບປະຈຸບັນ;
8. ສຳເນົາໃບຢັ້ງຢືນມອບພັນທະອາກອນ (ທີ່ບໍ່ໝົດອາຍຸ);
9. ສັນຍາທີ່ກ່ຽວຂ້ອງເປັນຕົ້ນ ສັນຍາຮ່ວມທຶນ, ສັນຍາຜູ້ຖືຮຸ້ນ, ສັນຍາຊື້-ຂາຍບໍລິມາດອິນເຕີເນັດ, ສັນຍາ ເຊົ່າເຄືອຂ່າຍ, ສັນຍາເຊົ່າໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອື່ນໆ (ຖ້າມີການປ່ຽນແປງ);

10. ສຳເນົາໃບທະບຽນວິສາຫະກິດ (ຖ້າມີການປ່ຽນແປງ ເຈົ້າຂອງວິສາຫະກິດ ຫຼື ຮຸ້ນສ່ວນ ໃຫ້ປະກອບເອກະສານ ກ່ຽວຂ້ອງມາພ້ອມ);
11. ຮູບສີ 3 x 4 ຈຳນວນ 02ໃບ ທີ່ມີອາຍຸບໍ່ເກີນ 03 ເດືອນ;
12. ໃບຢັ້ງຢືນທີ່ຢູ່ ແລະ/ຫຼື ສຳເນົາສຳມະໂນຄົວ ແລະ/ຫຼື ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ຖ້າມີການປ່ຽນແປງ);
13. ໃບຢັ້ງຢືນທີ່ຕັ້ງສຳນັກງານ ອອກໃຫ້ໂດຍອົງການປົກຄອງທ້ອງຖິ່ນ (ຖ້າມີການປ່ຽນແປງ);
14. ຊີວະປະຫວັດລະອຽດຜູ້ອຳນວຍການ (ຖ້າມີການປ່ຽນແປງ);
15. ເນື້ອໃນກ່ຽວກັບວັກສຸດທ້າຍ ມາດຕາ 13 ຊີວະປະຫວັດຫຍໍ້ ຂອງຜູ້ອຳນວຍການ ແລະ/ຫຼື ຜູ້ລົງທຶນ ແລະ ຫຼື ຜູ້ຖືຮຸ້ນ (ຖ້າມີການປ່ຽນແປງ).

ຖ້າປະກອບເອກະສານບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຈະບໍ່ຮັບເອກະສານເພື່ອພິຈາລະນາ.

**ມາດຕາ 17 ເງື່ອນໄຂໃນການພິຈາລະນາຕໍ່ ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ**

ເງື່ອນໄຂໃນການພິຈາລະນາຕໍ່ ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ມີດັ່ງນີ້:

1. ຕ້ອງດຳເນີນທຸລະກິດ ໂດຍບໍ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ບໍ່ຖືກອາຍັດຊັບສິນ, ບໍ່ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍ ຕາມກົດໝາຍຂອງ ສປປ ລາວ;
3. ຜູ້ໃຫ້ບໍລິການ ທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ຊົ່ວຄາວ, ກ່ອນຈະໄດ້ຮັບການພິຈາລະນາ ຕໍ່ໃບອະນຸຍາດເປັນໃບອະນຸຍາດຖາວອນ ຕ້ອງປະຕິບັດໄດ້ຢ່າງໜ້ອຍ 60% ຂອງແຜນການ ທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການດຳເນີນທຸລະກິດ ທີ່ສະໜອງໃຫ້ໃນເວລາຂໍອະນຸຍາດດຳເນີນທຸລະກິດ ທີ່ກຳນົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
4. ຕ້ອງປະກອບເອກະສານ ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;
5. ຕ້ອງສຳເລັດ ການເຊື່ອມຕໍ່ການລວມສູນການສື່ສານ ແລະ ການເຊື່ອມຕໍ່ເຄືອຂ່າຍພາກລັດ (ສຳລັບປະເພດການດຳເນີນທຸລະກິດ ບໍລິການອິນເຕີເນັດ ລະຫວ່າງປະເທດ);
6. ຕ້ອງສຳເລັດ ການຊຳລະຄ່າທຳນຽມ ແລະ ຄ່າບໍລິການ ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມຂອງປີຜ່ານມາຢ່າງຖືກຕ້ອງ ແລະ ຄົບຖ້ວນ (ສຳລັບປະເພດທຸລະກິດທີ່ນຳໃຊ້ຊັບພະຍາກອນໂທລະຄົມມະ ນາຄົມ);
7. ຕ້ອງສຳເລັດ ການມອບພັນທະເຂົ້າກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈິຕອນ;
8. ມີບຸກຄະລາກອນຄົບຖ້ວນຕາມມາດຖານເງື່ອນໄຂ ຂອງແຕ່ລະປະເພດການບໍລິການທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
9. ມີມາດຕະຖານເຕັກນິກ, ມາດຕະຖານຄວາມປອດໄພ ແລະ ມາດຕະຖານການເຊື່ອມຕໍ່ ທີ່ກຳນົດໄວ້ ມາດຕາ 21, ມາດຕາ 22 ແລະ ມາດຕາ 23 ຂອງຂໍ້ຕົກລົງສະບັບນີ້;

10. ມີໜ່ວຍງານທີ່ສາມາດບໍາລຸງຮັກສາ ແລະ ສ້ອມແປງ ຕາມແລວທາງສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ປະກອບມີເຄື່ອງມືຄົບຊຸດ ແລະ ພາຫະນະຮັບໃຊ້;
11. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກໍານົດ.

**ມາດຕາ 18 ໄລຍະເວລາພິຈາລະນາຕໍ່ໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ**

ໄລຍະເວລາພິຈາລະນາຕໍ່ໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ ແຕ່ລະປະເພດ ແມ່ນໃຊ້ເວລາພິຈາລະນາ ພາຍໃນ 15 ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ;

ໃນກໍລະນີເອກະສານຂອງຜູ້ຮ້ອງຂໍ ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຫຼື ບໍ່ມີເງື່ອນໄຂພຽງພໍ ທີ່ຈະໄດ້ຮັບການຕໍ່ໃບອະນຸຍາດ ອີງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິການອິນເຕີເນັດ ຈະບໍ່ພິຈາລະນາຕໍ່ໃບອະນຸຍາດໃຫ້ ແລະ ຈະແຈ້ງສາເຫດທີ່ບໍ່ພິຈາລະນາເປັນລາຍລັກອັກສອນພາຍໃນ 10 ວັນລັດຖະການ.

**ມາດຕາ 19 ການໂຈະໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ**

ຜູ້ໃຫ້ບໍລິການອິນເຕີເນັດ ຈະຖືກໂຈະໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດໍາເນີນທຸລະກິດເອງ ຫຼື ຈາກການຈັດຕັ້ງທີ່ກ່ຽວຂ້ອງ;
2. ດໍາເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ, ຫຼັກການ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນ ມາດຕາ 1, ມາດຕາ 4, ມາດຕາ 12 ແລະ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;
3. ບໍ່ປະຕິບັດຕາມ ມາດຕະຖານເຕັກນິກ, ມາດຕະຖານຄວາມປອດໄພ ແລະ ມາດຕະຖານການເຊື່ອມຕໍ່ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 21, ມາດຕາ 22 ແລະ ມາດຕາ 23 ຂອງຂໍ້ຕົກລົງສະບັບນີ້;
4. ດໍາເນີນທຸລະກິດ ບໍ່ຖືກຕ້ອງ ແລະ/ຫຼື ເກີນຂອບເຂດ ຕາມປະເພດ, ຮູບແບບ ແລະ ກິດຈະການ ທີ່ໄດ້ຮັບອະນຸຍາດ;
5. ພາຍຫຼັງໄດ້ຮັບໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ ແຕ່ບໍ່ມີການເຄື່ອນໄຫວໃນໄລຍະເວລາ ສອງປີຕິດຕໍ່ກັນ;
6. ກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ກ່ອນການໂຈະໃບອະນຸຍາດ ໃນກໍລະນີທີ 02 ຫາ 05 ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຈະອອກແຈ້ງເຕືອນໃຫ້ຜູ້ດໍາເນີນທຸລະກິດ ເພື່ອປັບປຸງແກ້ໄຂໃຫ້ສໍາເລັດ ຕາມແຕ່ລະກໍລະນີ.

ກ່ອນຈະກັບຄືນມາໃຫ້ບໍລິການໃໝ່ຫຼັງຈາກການໂຈະ ຕ້ອງໄດ້ຮັບການກວດກາ ແລະ ປະເມີນຜົນການແກ້ໄຂບັນຫາຕ່າງໆ ຕາມສາເຫດທີ່ເຮັດໃຫ້ມີການໂຈະ ຈາກຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 20 ການຍົກເລີກໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ**

ຜູ້ໃຫ້ບໍລິການອິນເຕີເນັດ ຈະຖືກຍົກເລີກ ແລະ ຖືກຖອນ ໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດໍາເນີນທຸລະກິດເອງ ຫຼື ຈາກການຈັດຕັ້ງທີ່ກ່ຽວຂ້ອງ;
2. ບໍ່ປັບປຸງແກ້ໄຂ ຕາມສາເຫດທີ່ມີການໂຈະ ທີ່ໄດ້ລະບຸໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້;
3. ພາຍຫຼັງທີ່ໄດ້ຮັບໃບອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ ແຕ່ບໍ່ມີການເຄື່ອນໄຫວໃນໄລຍະເວລາ 03 ປີຕິດຕໍ່ກັນ;

4. ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
5. ລະເມີດ ກົດໝາຍ ແລະ ລະບຽບການ ຢ່າງຮ້າຍແຮງ, ສ້າງຜົນເສຍຫາຍຢ່າງໃຫຍ່ຫຼວງຕໍ່ເສດຖະກິດ-ສັງຄົມ ແລະ ຜົນກະທົບຮ້າຍແຮງຕໍ່ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ສານຕັດສິນໃຫ້ຍຸບເລີກວິສາຫະກິດ ຫຼື ໃຫ້ລົ້ມລະລາຍ;
7. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 5
## ມາດຕະຖານ ເຕັກນິກ, ຄວາມປອດໄພ ແລະ ການເຊື່ອມຕໍ່

**ມາດຕາ 21 ມາດຕະຖານເຕັກນິກ**

ມາດຕະຖານເຕັກນິກ ປະກອບມີ ດັ່ງນີ້:

1. ມີຫ້ອງຄວບຄຸມລະບົບ ແລະ ຫ້ອງຕິດຕັ້ງອຸປະກອນ ທີ່ຮັບປະກັນ ລະບົບໄຟຟ້າຫຼໍ່ລ້ຽງ, ລະບົບຄວບຄຸມຄວາມເຢັນ, ລະບົບປ້ອງກັນອັກຄີໄພ ແລະ ລະບົບອື່ນໆທີ່ຈຳເປັນ;
2. ຕ້ອງພິມສັນຍາລັກກາໝາຍ ຂອງຜູ້ໃຫ້ບໍລິການອິນເຕີເນັດ ໃສ່ດ້ານນອກຂອງອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢ່າງຈະແຈ້ງ ແລະ ສາມາດກວດສອບໄດ້;
3. ຕ້ອງມີເຄືອຂ່າຍ ຫຼັກ ແລະ ສຳຮອງ (N+1) ເພື່ອຮັບປະກັນການບໍລິການໃຫ້ໄດ້ຕະຫຼອດ 24 ຊົ່ວໂມງ;
4. ອຸປະກອນ Router ຕ້ອງຮອງຮັບການເຊື່ອມຕໍ່ ການລວມສູນການສື່ສານ ແລະ/ຫຼື ການເຊື່ອມຕໍ່ເຄືອຂ່າຍພາກລັດ ໂດຍນຳໃຊ້ Border Gateway Protocol (BGP), ມີ Port ການເຊື່ອມຕໍ່ ດ້ວຍສາຍໄຍແກ້ວນຳແສງ ຂະໜາດ 01 Gigabit Ethernet ( 01 GE ) ຂຶ້ນໄປ, ຮອງຮັບການເຊື່ອມຕໍ່ Netflow, Netstream ແລະ ອື່ນໆທີ່ຈຳເປັນ;
5. ອຸປະກອນທີ່ນຳເຂົ້າມາ ຕິດຕັ້ງ ແລະ ຈຳໜ່າຍ ຕ້ອງໄດ້ຮັບການ ກວດກາ, ຢັ້ງຢືນມາດຕະຖານເຕັກນິກ ແລະ ໄດ້ຮັບອະນຸຍາດນຳເຂົ້າ ຈາກຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ແລະ ຂະແໜງການທີ່ກ່ຽວຂ້ອງ ເສຍກ່ອນ;
6. ຕ້ອງຮອງຮັບການເຊື່ອມຕໍ່ລະບົບຕ່າງໆ ຂອງລັດຖະບານທີ່ສ້າງຂຶ້ນແລະພັດທະນາ ໃນແຕ່ລະໄລຍະ.

**ມາດຕາ 22 ມາດຕະຖານຄວາມປອດໄພ**

ມາດຕະຖານຄວາມປອດໄພ ປະກອບມີ ດັ່ງນີ້:

1. ຕ້ອງຮັບປະກັນຄວາມປອດໄພ ຂໍ້ມູນທັງໝົດ ຂອງຜູ້ໃຊ້ບໍລິການ ບໍ່ໃຫ້ຖືກທຳລາຍ, ປ່ຽນແປງ ຫຼື ຖືກໂຈລະກຳ;
2. ຕ້ອງມີລະບົບ ຫຼັກ ແລະ ສຳຮອງ (N+1) ເພື່ອຮັບປະກັນການບໍລິການໃຫ້ໄດ້ຕະຫຼອດ 24 ຊົ່ວໂມງ ແລະ ມີການປ້ອງກັນເຫດການທີ່ອາດເກີດຂຶ້ນ ເຊັ່ນ: ການໂຈລະກຳຂໍ້ມູນ, ອັກຄີໄພ, ອຸທົກກະໄພ ແລະ ໄພທຳມະຊາດອື່ນໆ;
3. ຖ້າມີການນຳໃຊ້ເລກໝາຍໂທລະຄົມມະນາຄົມ, ເລກໝາຍອິນເຕີເນັດ ( IP ) ຕ້ອງໄດ້ຂຶ້ນທະບຽນນຳໃຊ້ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ສຳເລັດ ແລະ ຖືກຕ້ອງ ກ່ອນເປີດການນຳໃຊ້;

4. ຕ້ອງມີລະບົບ ຕິດຕາມ, ກວດກາ, ປ້ອງກັນ, ຕອບຕ້ານ, ກັ່ນຕອງຂໍ້ມູນ ແລະ ຮັກສາຄວາມປອດໄພ ເພື່ອປ້ອງກັນ ແລະ ປິດກັ້ນ ( Block ) ການເຂົ້າຫາເວັບໄຊ ແລະ ແຫຼ່ງຂໍ້ມູນທີ່ມີຜົນກະທົບທາງລົບຕໍ່ ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ກະທົບເຖິງວຽກງານວັດທະນະທຳ-ສັງຄົມ;
5. ຕ້ອງມີ ອຸປະກອນບັນທຶກ ແລະ ເກັບຮັກສາຂໍ້ມູນປະຫວັດການນຳໃຊ້ ຂອງຜູ້ໃຊ້ບໍລິການ ຢ່າງໜ້ອຍ 01 ປີ ເຊັ່ນ: Log file, Call Detail Record file ແລະ ອື່ນໆ ຕາມການກຳນົດ ຂອງ ອົງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິການອິນເຕີເນັດ;
6. ຕ້ອງຮັບປະກັນ ບໍ່ໃຫ້ຜູ້ທີ່ບໍ່ຫວັງດີ ນຳໃຊ້ເຄືອຂ່າຍອິນເຕີເນັດຂອງຕົນ ເຂົ້າໃນການເຮັດອາຊະຍາກຳ, ການພະນັນອອນລາຍ, ເພື່ອໄປທຳລາຍ ຫຼື ສ້າງຄວາມເສຍຫາຍຕໍ່ພາກສ່ວນອື່ນ ແລະ ສັງຄົມ.

**ມາດຕາ 23 ມາດຕະຖານການເຊື່ອມຕໍ່**

ມາດຕະຖານການເຊື່ອມຕໍ່ ປະກອບມີ ດັ່ງນີ້:

1. ທຸກການເຊື່ອມຕໍ່ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຂົ້າ-ອອກ ສປປ ລາວ ຕ້ອງໄດ້ຮັບການ ກວດກາ, ຢັ້ງຢືນ ແລະ ອອກອະນຸຍາດ ຈາກອົງການດັດສົມໂທລະຄົມມະນາຄົມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ເສຍກ່ອນ ຈຶ່ງອະນຸຍາດໃຫ້ເຊື່ອມຕໍ່;
2. ທຸກການເຊື່ອມຕໍ່ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຂົ້າ-ອອກ ສປປ ລາວ ຕ້ອງເຊື່ອມຕໍ່ຜ່ານບັນດາຈຸດເຊື່ອມຕໍ່ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ;
3. ຕ້ອງປະຕິບັດ ການເຊື່ອມຕໍ່ຜ່ານການລວມສູນການສື່ສານ ແລະ/ຫຼື ເຄືອຂ່າຍພາກລັດ ຢ່າງເຂັ້ມງວດ;
4. ການຕິດຕັ້ງສາຍໄຍແກ້ວນຳແສງ (Optical Fiber Cable) ໃນຂອບເຂດທົ່ວປະເທດ ຕ້ອງໄດ້ຮັບການອະນຸຍາດ ແລະ ມີແຈ້ງການ ຈາກຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ເສຍກ່ອນ ຈຶ່ງສາມາດ ດຳເນີນການຕິດຕັ້ງໄດ້;
5. ພະນັກງານຕິດຕັ້ງອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງນຸ່ງຖືເຄື່ອງແບບສະເພາະ ທີ່ມີເຄື່ອງໝາຍ ຫຼື ກາໝາຍ ແລະ ຊື່ ຂອງບໍລິສັດ ຢ່າງຈະແຈ້ງ, ຊັດເຈນ ແລະ ສາມາດກວດສອບໄດ້;
6. ການນຳໃຊ້ເລກໝາຍເຄືອຂ່າຍ (ASN) ແລະ ເລກໝາຍອິນເຕີເນັດ (IP) ຕາມແຕ່ລະຮຸ່ນ IPV4, IPV6 ຕ້ອງໄດ້ຂໍອະນຸຍາດນຳໃຊ້ຈາກ ສູນອິນເຕີເນັດ ແຫ່ງຊາດ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເສຍກ່ອນ ຈຶ່ງສາມາດສະເໜີຂໍນຳໃຊ້ ຈາກອົງການຄຸ້ມຄອງເລກໝາຍອິນເຕີເນັດສາກົນ;
7. ອຸປະກອນການເຊື່ອມຕໍ່ ຕ້ອງມີ Port ການເຊື່ອມຕໍ່ສາຍສົ່ງສັນຍານເພື່ອຮອງຮັບບໍລິມາດການຮັບສົ່ງຂໍ້ມູນ ທີ່ແຕກຕ່າງກັນ;
8. ຕ້ອງມີເສັ້ນທາງເຊື່ອມຕໍ່ກັບເຄືອຂ່າຍອິນເຕີເນັດໄດ້ທົ່ວໂລກ (ສຳລັບປະເພດ ຜູ້ດຳເນີນທຸລະກິດ ບໍລິການອິນເຕີເນັດ ລະຫວ່າງປະເທດ).

## ໝວດທີ 6
## ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ອິນເຕີເນັດ

**ມາດຕາ 24 ສິດ ຂອງຜູ້ໃຫ້ບໍລິການອິນເຕີເນັດ**

ຜູ້ໃຫ້ບໍລິການອິນເຕີເນັດ ມີສິດ ດັ່ງນີ້:

1. ສະເໜີຂໍຕໍ່, ໂຈະ ຫຼື ຍົກເລີກ ການດຳເນີນທຸລະກິດຂອງຕົນ;
2. ໂຈະການໃຫ້ບໍລິການແກ່ຜູ້ໃຊ້ບໍລິການ ຕາມສັນຍາທີ່ຕົກລົງກັນ;
3. ສະເໜີຂໍປັບປຸງ ຫຼື ປ່ຽນແປງຂໍ້ມູນໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ;
4. ອະນຸຍາດຜູ້ໃຫ້ບໍລິການອິນເຕີເນັດອື່ນ ເຊົ່າໂຄງລ່າງພື້ນຖານ ແລະ ເຊື່ອມຕໍ່ກັບລະບົບອິນເຕີເນັດ ຂອງຕົນຕາມການຕົກລົງຮ່ວມກັນ;
5. ໄດ້ຮັບຜົນປະໂຫຍດຈາກການລົງທຶນຂອງຕົນ;
6. ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
7. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ພັນທະ ຂອງຜູ້ໃຫ້ບໍລິການອິນເຕີເນັດ**

ຜູ້ໃຫ້ບໍລິການອິນເຕີເນັດ ມີພັນທະ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ຕໍ່ພະນັກງານ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການຕິດຕາມ ແລະ ກວດກາ ການດຳເນີນທຸລະກິດ;
2. ຮັບປະກັນ, ປະຕິບັດຕາມຫຼັກການ, ເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນ ມາດຕາ 4, ມາດຕາ 12, ມາດຕາ 17, ມາດຕາ 21, ມາດຕາ 22 ແລະ ມາດຕາ 23 ຂອງຂໍ້ຕົກລົງສະບັບນີ້;
3. ສະໜອງຂໍ້ມູນ ແລະ ສັນຍາການເຊື່ອມຕໍ່ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ໃຫ້ແກ່ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ເປັນແຕ່ລະໄຕມາດ ຫຼື ຕາມການແຈ້ງໃນແຕ່ລະກໍລະນີ;
4. ຮັກສາຂໍ້ມູນຂອງຜູ້ໃຊ້ບໍລິການ ໃຫ້ເປັນຄວາມລັບ ແລະ ປອດໄພ, ຍົກເວັ້ນກໍລະນີ ມີຄຳສັ່ງຈາກອົງການຈັດຕັ້ງທີ່ມີສິດອຳນາດກ່ຽວຂ້ອງ;
5. ບັນທຶກ ແລະ ເກັບຮັກສາ ຂໍ້ມູນປະຫວັດການນຳໃຊ້ ຂອງຜູ້ໃຊ້ບໍລິການອິນເຕີເນັດ ຢ່າງໜ້ອຍ 01 ປີ;
6. ສະໜອງຂໍ້ມູນຂ່າວສານ ກ່ຽວກັບການບໍລິການຕ່າງໆ ໃຫ້ແກ່ ຜູ້ໃຊ້ບໍລິການ ຢ່າງເປັນປົກກະຕິ ຈະແຈ້ງ ແລະ ຊັດເຈນ;
7. ຮັບປະກັນການບໍລິການທີ່ມີຄຸນນະພາບ, ການແຂ່ງຂັນຢ່າງເປັນທຳ ແລະ ລາຄາຍຸຕິທຳ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
8. ແກ້ໄຂບັນຫາ ແລະ ຂໍ້ຂັດຂ້ອງ ທາງດ້ານເຕັກນິກ ໃຫ້ແກ່ ຜູ້ໃຊ້ບໍລິການ ຕາມລະບຽບການ;
9. ມີແຜນຟື້ນຟູ ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນກໍລະນີເກີດໄພພິບັດ, ວິກິດການ, ພາວະສຸກເສີນ ແລະ ໃນກໍລະນີເຄືອຂ່າຍຂັດຂ້ອງ;
10. ມີເຄື່ອງແບບ, ເຄື່ອງໝາຍ ຫຼື ກາໝາຍ ແລະ ຊື່ ຂອງບໍລິສັດ ຢ່າງຈະແຈ້ງ ແລະ ຊັດເຈນ ສຳລັບພະນັກງານຕິດຕັ້ງ ສ້ອມແປງ ອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ;
11. ພິມສັນຍາລັກກາໝາຍ ຂອງຜູ້ໃຫ້ບໍລິການອິນເຕີເນັດ ໃສ່ດ້ານນອກຂອງອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢ່າງຈະແຈ້ງ ຕະຫຼອດອາຍຸການໃຊ້ງານ;
12. ເກັບກູ້ ອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ບໍ່ໄດ້ນຳໃຊ້ແລ້ວ ເພື່ອຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມປອດໄພຕໍ່ ຊີວິດ, ຊັບສິນ ບໍ່ໃຫ້ມີຜົນກະທົບຕໍ່ ສັງຄົມ ແລະ ສິ່ງແວດລ້ອມ;

13. ລາຍງານຂໍ້ມູນການບໍລິການ ຂອງຕົນ ເຊັ່ນ: ການນໍາໃຊ້ຊັບພະຍາກອນໂທລະຄົມມະນາຄົມ, ເຕັກນິກ ຄວາມປອດໄພ ແລະ ການເຊື່ອມຕໍ່ ໃຫ້ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນ ປົກກະຕິ (ພາຍໃນເດືອນ ພະຈິກ ຂອງທຸກປີ);
14. ປະກອບສ່ວນ ແລະ ສົ່ງເສີມ ການນໍາໃຊ້ອິນເຕີເນັດ ເຂົ້າໃນຂົງເຂດການສຶກສາ, ສາທາລະນະສຸກ, ເຂດ ຫ່າງໄກສອກຫຼີກ, ວຽກງານສາມສ້າງ, ຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕາມລຽບຊາຍແດນ;
15. ເສຍຄ່າທໍານຽມ, ຄ່າບໍລິການ ແລະ ພັນທະອື່ນໆ ໃຫ້ລັດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກໍານົດ;
16. ຮັບຜິດຊອບຄ່າໃຊ້ຈ່າຍ ສໍາລັບການກວດກາ, ຢັ້ງຢືນຈຸດເຊື່ອມຕໍ່ ກ່ອນການເຊື່ອມຕໍ່ຕົວຈິງ, ການດໍາ ເນີນການເຊື່ອມຕໍ່ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຂົ້າ-ອອກ ສປປ ລາວ ແລະ ການເຊື່ອມຕໍ່ພາກລັດ ຊຶ່ງລວມມີ ມູນຄ່າ ຮາດແວ, ຊອບແວ, ແຮງງານຕ່າງໆ ທີ່ຕິດພັນວຽກງານ ດັ່ງກ່າວ ແລະ ອັດຕາລົງເຄື່ອນໄຫວວຽກຂອງພະນັກງານ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຕາມລະບຽບ ຂອງກະຊວງ ການເງິນ ກໍານົດໃນແຕ່ລະໄລຍະ;
17. ຮັບຜິດຊອບ ແກ້ໄຂຜົນກະທົບ ແລະ ທົດແທນຄ່າເສຍຫາຍທີ່ເກີດຂຶ້ນ ຈາກການໃຫ້ບໍລິການຂອງຕົນ;
18. ທຸກອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງໄດ້ຜ່ານການກວດກາ, ຢັ້ງຢືນມາດຕະຖານ ເຕັກນິກ ແລະ ຕ້ອງໄດ້ຮັບອະນຸຍາດນໍາເຂົ້າ ໂດຍອີງໃສ່ແຜນການນໍາເຂົ້າອຸປະກອນໂທລະຄົມມະນາ ຄົມ ແລະ ອິນເຕີເນັດ ປະຈໍາປີຂອງຕົນ ທີ່ໄດ້ຮອງຮັບຈາກ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
19. ປະຕິບັດ ພັນທະອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ຂອງຜູ້ໃຊ້ບໍລິການອິນເຕີເນັດ**

ຜູ້ໃຊ້ບໍລິການ ອິນເຕີເນັດ ມີສິດ ດັ່ງນີ້:

1. ນໍາໃຊ້ທຸກບໍລິການຢ່າງເທົ່າທຽມກັນ ດ້ວຍອັດຕາຄ່າບໍລິການທີ່ເໝາະສົມ;
2. ເລືອກການໃຊ້ບໍລິການຕາມຄວາມຕ້ອງການ;
3. ທວງຖາມ ຫຼື ຮ້ອງຟ້ອງ ຜູ້ໃຫ້ບໍລິການ ອິນເຕີເນັດ ເມື່ອໄດ້ຮັບການບໍລິການທີ່ບໍ່ເປັນທໍາ;
4. ນໍາໃຊ້ສິດອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ພັນທະ ຂອງຜູ້ໃຊ້ບໍລິການອິນເຕີເນັດ**

ຜູ້ໃຊ້ບໍລິການ ອິນເຕີເນັດ ມີພັນທະ ດັ່ງລຸ່ມນີ້:

1. ຂຶ້ນທະບຽນການນໍາໃຊ້ ແລະ ສະໜອງຂໍ້ມູນຢ່າງຖືກຕ້ອງ ຈຶ່ງສາມາດນໍາໃຊ້ການບໍລິການໄດ້;
2. ຊໍາລະຄ່າບໍລິການ ຕາມລະບຽບການ ຫຼື ຕາມການຕົກລົງຂອງສອງຝ່າຍ;
3. ຮັບຜິດຊອບຕໍ່ເນື້ອໃນຂໍ້ມູນຂ່າວສານຂອງຕົນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;
4. ປະຕິບັດ ພັນທະອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 28 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ ແລະ ນິຕິບຸກຄົນ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດບໍລິການ ອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ທຳລາຍອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂອງບຸກຄົນ ຫຼື ຜູ້ໃຫ້ບໍລິການອິນເຕີເນັດອື່ນ;
3. ເຊື່ອມຕໍ່ອິນເຕີເນັດ ກັບຕ່າງປະເທດໂດຍບໍ່ໄດ້ຮັບອະນຸຍາດ;
4. ນຳເຂົ້າອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດ;
5. ສ້າງຄວາມວຸ້ນວາຍ, ຄວາມບໍ່ເປັນລະບຽບຮຽບຮ້ອຍແກ່ສັງຄົມ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 29 ຂໍ້ຫ້າມ ສຳລັບຜູ້ໃຫ້ບໍລິການອິນເຕີເນັດ**

ຫ້າມ ຜູ້ໃຫ້ບໍລິການອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍນຳໃຊ້ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ທີ່ໝົດອາຍຸ;
2. ເອົາໃບອະນຸຍາດດຳເນີນທຸລະກິດ ໃຫ້ຜູ້ອື່ນ ນຳໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ບໍລິການເກີນ ປະເພດ ຫຼື ຂອບເຂດ ທີ່ໄດ້ຮັບອະນຸຍາດ;
4. ເຊື່ອມຕໍ່ລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຂົ້າ-ອອກ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;
5. ຕິດຕັ້ງ ສາຍໄຍແກ້ວນຳແສງ ຢູ່ພາຍໃນປະເທດ, ເຂົ້າ-ອອກ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;
6. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍ ໃຫ້ແກ່ຜູ້ໃຫ້ບໍລິການອື່ນ;
7. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອຳຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິການອິນເຕີເນັດ ແລະ ເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ;
8. ເປີດເຜີຍຂໍ້ມູນສ່ວນຕົວ ຂອງຜູ້ໃຊ້ບໍລິການອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ອົງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິການອິນເຕີເນັດ ຫຼື ເຈົ້າໜ້າທີ່ ທີ່ມີອຳນາດກ່ຽວຂ້ອງ;
9. ທຳລາຍ ຫຼື ລຶບລ້າງ ຫຼື ປ່ຽນແປງ ຂໍ້ມູນຂອງຜູ້ໃຊ້ບໍລິການອິນເຕີເນັດ;
10. ບໍລິການ ຫຼື ເກັບຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມສັນຍາ ຫຼື ບໍ່ຖືກຕ້ອງຕາມແຈ້ງການໃນສື່ຕ່າງໆ;
11. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ 8
## ອົງການຄຸ້ມຄອງ ແລະ ກວດກາ ວຽກງານການບໍລິການອິນເຕີເນັດ

**ມາດຕາ 30 ອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນອົງການຄຸ້ມຄອງ, ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂດຍປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການບໍລິການອິນເຕີເນັດ ຂອງ ສປປ ລາວ.

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ ເປັນເສນາທິການ, ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ໂຄສະນາເຜີຍແຜ່ ວິໄສທັດ, ຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາ ກ່ຽວກັບການດຳເນີນທຸລະກິດ ບໍລິການອິນເຕີເນັດ;
2. ກຳນົດ ຫຼັກການ ແລະ ລະບຽບການ ໃນການຄຸ້ມຄອງການເຄື່ອນໄຫວ ຂອງຫົວໜ່ວຍທຸລະກິດ ບໍລິການອິນເຕີເນັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
3. ປ້ອງກັນ, ສະກັດກັ້ນ, ຕອບຕ້ານ ແລະ ແກ້ໄຂ ການດຳເນີນທຸລະກິດ ບໍລິການອິນເຕີເນັດ ທີ່ບໍ່ຖືກຕ້ອງ ຢ່າງເຂັ້ມງວດ;
4. ຕົກລົງການ ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດຳເນີນທຸລະກິດ ບໍລິການອິນເຕີເນັດ;
5. ຮັບຮອງການດັດແກ້ ປະເພດ, ຮູບແບບ ແລະ ກິດຈະການ ກ່ຽວກັບການດຳເນີນທຸລະກິດ;
6. ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການດຳເນີນທຸລະກິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການ ນຳເຂົ້າ, ເຄື່ອນຍ້າຍ, ສົ່ງອອກ ແລະ ທຳລາຍ ອຸປະກອນ ອິນເຕີເນັດ ຕາມກົດໝາຍ ແລະ ລະບຽບການ;
8. ຕິດຕາມ ແລະ ກວດກາ ການລະເມີດ ຫຼື ການກະທຳຜິດ ຕໍ່ ກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຂອງບັນດາຫົວໜ່ວຍທຸລະກິດ ທີ່ໃຫ້ບໍລິການອິນເຕີເນັດ ພາຍໃນ ສປປ ລາວ ຫຼື ຜູ້ບໍ່ຫວັງດີ ນຳໃຊ້ ບໍລິການອິນເຕີເນັດ ພາຍໃນ ສປປ ລາວ ເພື່ອສ້າງຄວາມບໍ່ສະຫງົບ ແລະ ບໍ່ປອດໄພ ແກ່ສັງຄົມ ຫຼື ສ້າງ ຄວາມເສຍຫາຍຕໍ່ຜູ້ອື່ນ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງການດຳເນີນທຸລະກິດ ບໍລິການອິນເຕີເນັດ ຕໍ່ລັດຖະບານ ເປັນປົກກະຕິ;
10. ພົວພັນ ແລະ ຮ່ວມມື ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການຄຸ້ມຄອງການບໍລິການອິນເຕີເນັດ;
11. ນຳໃຊ້ ສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງອົງການດັດສົມໂທລະຄົມມະນາຄົມ**

ອົງການດັດສົມໂທລະຄົມມະນາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຈັດຕັ້ງປະຕິບັດ ແລະ ເຜີຍແຜ່ວິໄສທັດ, ຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາ ກ່ຽວກັບການດຳເນີນທຸລະກິດ ບໍລິການອິນເຕີເນັດ;
2. ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດ ບໍລິການອິນເຕີເນັດ;
3. ອອກ ແລະ ຕໍ່ ອະນຸຍາດ, ປ່ຽນແປງ, ໂຈະ ແລະ ຍົກເລີກ ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;
4. ຮິບຖອນ ແລະ ຕັດສາຍສົ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂອງຜູ້ທີ່ລະເມີດ ຂໍ້ຫ້າມ, ມາດຕະຖານເຕັກນິກ, ຄວາມປອດໄພ ແລະ ການເຊື່ອມຕໍ່ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ຕາມ ການຕົກລົງເຫັນດີຂອງຂັ້ນເທິງ;

5. ກ່າວເຕືອນ, ສຶກສາອົບຮົມ ແລະ ປັບໃໝ ຕໍ່ ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດ ກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້;
6. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບ ການດຳເນີນທຸລະກິດ ບໍລິການອິນເຕີເນັດ ເປັນຕົ້ນ: ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆ;
7. ດັດແກ້ ປະເພດ, ຮູບແບບ ແລະ ກົດຈະການ ກ່ຽວກັບການດຳເນີນທຸລະກິດ;
8. ອອກໃບສັ່ງມອບ ຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກ ຫຼື ຕໍ່ ໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແລະ ຄ່າອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
9. ອອກໃບສັ່ງມອບ ຄ່າປັບໃໝ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກະທຳຜິດຕໍ່ ກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້;
10. ນຳໃຊ້ ສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ວິໄສທັດ, ຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາ ກ່ຽວກັບການຄຸ້ມຄອງການດຳເນີນທຸລະກິດ ບໍລິການອິນເຕີເນັດ;
2. ອອກ, ຕໍ່, ປ່ຽນແປງ, ໂຈະ ແລະ ຍົກເລີກ ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ຕາມການແບ່ງຂັ້ນຄຸ້ມຄອງ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດໃຫ້;
3. ຕິດຕາມ, ກວດກາ, ການຕິດຕັ້ງ, ຮື້ຖອນ ແລະ ຕັດສາຍສິ່ງໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕາມເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມການແບ່ງຂັ້ນຄຸ້ມຄອງ ໂດຍໄດ້ຮັບການເຫັນດີຈາກຂັ້ນເທິງ;
4. ກ່າວເຕືອນ, ສຶກສາອົບຮົມ ແລະ ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;
5. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບການດຳເນີນທຸລະກິດ ບໍລິການອິນເຕີເນັດ ເປັນຕົ້ນ ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ອອກໃບສັ່ງມອບ ຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກ ແລະ ຕໍ່ ໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ຕາມການແບ່ງຂັ້ນຄຸ້ມຄອງຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດໃຫ້;
7. ອອກໃບສັ່ງມອບ ຄ່າປັບໃໝ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກະທຳຜິດຕໍ່ ກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້ ຕາມການແບ່ງຂັ້ນຄຸ້ມຄອງ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານກຳນົດໃຫ້;
8. ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

# ໝວດທີ 9
# ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34** ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການໃຫ້ບໍລິການອິນເຕີເນັດທີ່ມີຄຸນນະພາບ ຖືກຕ້ອງ ຕາມຈຸດປະສົງ, ເງື່ອນໄຂ ແລະ ມາດຕະຖານ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບນະໂຍບາຍອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35** ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໂຈະ ການເຄື່ອນໄຫວທຸລະກິດສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ໄວ້ຊົ່ວຄາວ ຫຼື ຍົກເລີກໃບອະນຸຍາດດຳເນີນທຸລະກິດ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເມີດຄັ້ງທີ 01: ຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ ຕາມແຕ່ລະກໍລະນີ ທີ່ລະບຸໃນ ມາດຕາ 36 ຂອງຂໍ້ຕົກລົງສະບັບນີ້;
2. ລະເມີດຄັ້ງທີ 02: ຈະຖືກປັບໃໝ 02 ເທົ່າ ຕາມທີ່ລະບຸໄວ້ໃນ ມາດຕາ 36 ຂອງຂໍ້ຕົກລົງສະບັບນີ້ ແລະ ໂຈະໃບອະນຸຍາດ ຊົ່ວຄາວ ໄລຍະ 90 ວັນ ເພື່ອໃຫ້ປັບປຸງໃຫ້ຖືກຕ້ອງຕາມ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
3. ລະເມີດຄັ້ງທີ 03: ຈະຖືກປັບໃໝ 05 ເທົ່າ ຕາມແຕ່ລະກໍລະນີທີ່ລະບຸໄວ້ໃນ ມາດຕາ 36 ຂອງຂໍ້ຕົກລົງສະບັບນີ້ ແລະ ຖອນໃບອະນຸຍາດ ດຳເນີນທຸລະກິດ.

ຖ້າຫາກມີການກະທຳຜິດ ທີ່ມີຜົນກະທົບຕໍ່ກັບ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫຼື ປະມວນກົດໝາຍອາຍາ ແມ່ນຈະມອບໃຫ້ ພາກສ່ວນກ່ຽວຂ້ອງ ດຳເນີນການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 36** ມາດຕະການປັບໃໝ

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດ ບໍລິການອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 500,000,000 ກີບ (ຫ້າຮ້ອຍລ້ານກີບ) ພ້ອມທັງໃຫ້ຢຸດເຊົາບໍລິການໂດຍທັນທີ ແລະ ຍຶດເອົາອຸປະກອນທັງໝົດເຂົ້າເປັນຊັບສິນຂອງລັດ;
2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 500,000,000 ກີບ (ຫ້າຮ້ອຍລ້ານກີບ) ພ້ອມທັງໃຫ້ຢຸດເຊົາບໍລິການໂດຍທັນທີ;
3. ດຳເນີນທຸລະກິດ ໂດຍນຳໃຊ້ໃບອະນຸຍາດດຳເນີນທຸລະກິດ ບໍລິການອິນເຕີເນັດ ທີ່ໝົດອາຍຸແລ້ວ ຈະຖືກປັບໃໝ 500,000,000 ກີບ (ຫ້າຮ້ອຍລ້ານກີບ);
4. ບໍລິການເກີນປະເພດ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 300,000,000 ກີບ (ສາມຮ້ອຍລ້ານກີບ) ຕໍ່ປະເພດ ຫຼື ກິດຈະການ;

5. ຂະຫຍາຍເຄືອຂ່າຍ ຫຼື ເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຂົ້າ-ອອກ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 500,000,000 ກີບ (ຫ້າຮ້ອຍລ້ານກີບ) ຕໍ່ໜຶ່ງສາຍໄຍແກ້ວນໍາແສງ;
6. ຕິດຕັ້ງ ສາຍໄຍແກ້ວນໍາແສງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ຈະຖືກປັບໃໝ 100,000,000 ກີບ (ໜຶ່ງຮ້ອຍລ້ານກີບ) ຕໍ່ໜຶ່ງຄໍສາຍໄຍແກ້ວນໍາແສງ;
7. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ ຜູ້ບໍລິການອື່ນ ຈະຖືກປັບໃໝ 100,000,000 ກີບ (ໜຶ່ງຮ້ອຍລ້ານກີບ) ຕໍ່ກໍລະນີ ຕໍ່ຄັ້ງ;
8. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອໍາຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິການອິນເຕີເນັດ ຈະຖືກປັບໃໝ 200,000,000 ກີບ (ສອງຮ້ອຍລ້ານກີບ) ຕໍ່ຄັ້ງ;
9. ທໍາລາຍ ຂໍ້ມູນປະຫວັດການນໍາໃຊ້ບໍລິການອິນເຕີເນັດ ຂອງຜູ້ໃຊ້ບໍລິການ ຕໍ່າກວ່າ ໜຶ່ງປີ ຈະຖືກປັບໃໝ 50,000,000 ກີບ (ຫ້າສິບລ້ານກີບ) ຕໍ່ໜຶ່ງຜູ້ໃຊ້ບໍລິການ;
10. ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ໃຊ້ບໍລິການ ຫຼື ອົງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິການອິນເຕີເນັດ ຫຼື ເຈົ້າໜ້າທີ່ ທີ່ມີອໍານາດກ່ຽວຂ້ອງ ຈະຖືກປັບໃໝ 100,000,000 ກີບ (ໜຶ່ງຮອ້ຍລ້ານກີບ) ຕໍ່ໜຶ່ງຜູ້ໃຊ້ບໍລິການ ຕໍ່ຄັ້ງ;
11. ບໍລິການ ຫຼື ເກັບຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມສັນຍາ ຫຼື ບໍ່ຖືກຕ້ອງຕາມແຈ້ງການໃນສື່ຕ່າງໆ ຫຼື ຕາມການຕົກລົງກັນຂອງສອງຝ່າຍ ຈະຖືກປັບໃໝຄັ້ງລະ 50,000,000 ກີບ (ຫ້າສິບລ້ານກີບ) ຕໍ່ໜຶ່ງປະເພດການບໍລິການ ຕໍ່ຄັ້ງ;
12. ນໍາເຂົ້າອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 100,000,000 ກີບ (ໜຶ່ງຮອ້ຍລ້ານກີບ) ຕໍ່ອຸປະກອນ;
13. ບໍ່ຊໍາລະຄ່າທໍານຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ ຫຼັງຈາກທີ່ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໄດ້ອອກໃບສັ່ງມອບ ໄປແລ້ວພາຍໃນເວລາ 30 ວັນ ຈະຖືກປັບໃໝ 0,5 ສ່ວນຮ້ອຍ (ສູນຈຸດຫ້າສ່ວນຮ້ອຍ) ຕໍ່ວັນຂອງມູນຄ່າທີ່ຕ້ອງຊໍາລະຕາມໃບສັ່ງມອບ;
14. ສະໜອງການບໍລິການໃຫ້ຜູ້ທີ່ບໍ່ຫວັງດີ ນໍາໃຊ້ເຄືອຂ່າຍອິນເຕີເນັດຂອງຕົນ ເຂົ້າໃນການເຮັດອາຊະຍາກໍາ, ການພະນັນອອນລາຍ, ເພື່ອໄປທໍາລາຍ ຫຼື ສ້າງຄວາມເສຍຫາຍຕໍ່ພາກສ່ວນອື່ນ ແລະ ສັງຄົມ ຈະຖືກປັບໃໝ 300,000,000 ກີບ ຕໍ່ຄັ້ງ;
15. ບໍ່ເກັບມ້ຽນ ອຸປະກອນໂທລະຄົມມະນາຄົມ ທີ່ບໍ່ນໍາໃຊ້ແລ້ວ, ສ້າງຄວາມບໍ່ເປັນລະບຽບຮຽບຮ້ອຍ, ບໍ່ຮັບປະກັນຄວາມປອດໄພຕໍ່ ຊີວິດ, ຊັບສິນ, ມີຜົນກະທົບຕໍ່ ສັງຄົມ, ສິ່ງແວດລ້ອມ ຈະຖືກປັບໃໝ 50,000,000 ກີບ (ຫ້າສິບລ້ານກີບ) ຕໍ່ອຸປະກອນ ແລະ ສໍາລັບສາຍສົ່ງໂທລະຄົມມະນາຄົມ ຈະຖືກປັບໃໝ 100,000 ກີບ (ໜຶ່ງແສນກີບ) ຕໍ່ສາຍ ຕໍ່ແມັດ;
16. ບໍ່ພິມສັນຍາລັກກາໝາຍ ຂອງບໍລິສັດຕົນ ໃສ່ດ້ານນອກຂອງອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢ່າງຈະ ແຈ້ງຕະຫຼອດອາຍຸການໃຊ້ງານ ຈະຖືກປັບໃໝ 100,000,000 ກີບ (ໜຶ່ງຮ້ອຍລ້ານກີບ) ຕໍ່ອຸປະກອນ;

17. ບໍ່ມີເຄື່ອງແບບ, ເຄື່ອງໝາຍ ຫຼື ກາໝາຍ ແລະ ຊື່ ຂອງບໍລິສັດ ຢ່າງຈະແຈ້ງ ແລະ ຊັດເຈນ ສໍາລັບ ພະນັກງານຕິດຕັ້ງ ແລະ ສ້ອມແປງ ອຸປະກອນໂທລະຄົມມະນາຄົມ ຈະຖືກປັບໃໝ 100,000,000 ກີບ (ໜຶ່ງຮ້ອຍລ້ານກີບ) ຕໍ່ຄັ້ງ;

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການຄຸ້ມຄອງໂທລະຄົມມະນາຄົມ ເປັນເຈົ້າການປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ນັບແຕ່ສູນກາງ ຫາ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 38 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍ ການອະນຸຍາດດໍາເນີນທຸລະກິດ ບໍລິການອິນເຕີເນັດ ສະບັບເລກທີ 3972/ປທສ, ລົງວັນທີ 13 ທັນວາ 2019.

**ລັດຖະມົນຕີ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

**ສັນຕິສຸກ ສິມມາລາວົງ**